ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..........000..........

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 137

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ເລກທີ........./ກຊສ.ກສລ

ນະຄອນຫຼວງວຽງຈັນ, ວັນທີ...7...ມີນາ 2016

# ຄູ່ມືແນະນຳເພີ່ມເຕີມ
# ກ່ຽວກັບ ຂັ້ນຕອນການຂໍອະນຸຍາດ (ໃໝ່ ຫຼື ຕໍ່) ດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ

- ອີງຕາມ ມາດຕາ 44 ແລະ 45 ຂອງກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 0345/ກຊສ, ລົງວັນທີ 22 ມັງກອນ 2015.

ຄູ່ມືແນະນຳສະບັບນີ້ ອະທິບາຍເພີ່ມເຕີມໃນການພັນລະນາຍາຍຈາກ ຂໍ້ຕົກລົງ ວ່າດ້ວຍລະບຽບການດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 0345/ກຊສ, ລົງວັນທີ 22 ມັງກອນ 2015 ໃຫ້ເປັນອັນລະອຽດ ໂດຍສະເພາະໃນບັນຫາທີ່ຍັງເຫັນວ່າບໍ່ຈະແຈ້ງເພື່ອໃຫ້ບັນດາວິສາຫະກິດທີ່ມີຈຸດປະສົງ ຢາກຂໍໃບອະນຸຍາດ ຫຼື ຂໍຕໍ່ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ສາມາດຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ຕາມເງື່ອນໄຂ, ມາດຕະຖານ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງ ວ່າດ້ວຍ ລະບຽບການ ເຊັ່ນ: ການປະກອບບຸກຄະລາກອນ ແລະ ການປະກອບເອກະສານພື້ນຖານຕ່າງໆ, ໃບຄຳຮ້ອງ, ບົດວິພາກເສດຖະກິດຂອງວິສາຫະກິດ, ການປະກອບຊີວະປະຫວັດ, ອຸປະກອນ, ໃບຢັ້ງຢືນຖານະດ້ານການເງິນ, ກົດລະບຽບຂອງວິສາຫະກິດ ແລະ ບົດລາຍງານການເຄື່ອນໄຫວຂອງວິສາຫະກິດ ຊຶ່ງມີລາຍລະອຽດດັ່ງນີ້:

## 1. ການປະກອບຊ່ຽວຊານສະເພາະດ້ານ.

ຊ່ຽວຊານສະເພາະດ້ານທີ່ຈະປະກອບເຂົ້າໃນ ວິສາຫະກິດທີ່ຈະດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ຕ້ອງມີມາດຕະຖານຕາມທີ່ໄດ້ກຳນົດໃນມາດຕາ 6 (ຂໍ້ 3 ແລະ ຂໍ້ 4) ແລະ ມາດຕາ 7 (ຂໍ້ 1 ແລະ ຂໍ້ 2) ຂອງຂໍ້ຕົກລົງ ສະບັບເລກທີ 0345/ກຊສ ເຫັນວ່າບໍ່ຈະແຈ້ງ, ສະນັ້ນ, ຈຶ່ງມີການດັດແກ້ໃຫ້ມີຄວາມຈະແຈ້ງຂຶ້ນຕື່ມ ດັ່ງນີ້:

ມາດຕາ 7 (ປັບປຸງ) ມາດຕະຖານຂອງຊ່ຽວຊານສະເພາະດ້ານ

1. ການໃຫ້ບໍລິການວິຊາການ ກ່ຽວກັບ ສິ່ງແວດລ້ອມ ນັບແຕ່ຂໍ້ 2 ຮອດຂໍ້ 10, ມາດຕາ 2 ຂອງຂໍ້ຕົກລົງ ສະບັບເລກທີ0345/ກຊສ ຕ້ອງປະກອບຊ່ຽວຊານສະເພາະດ້ານປະຈຳຢູ່ວິສາຫະກິດຢ່າງໜ້ອຍ ສາມຄົນຂຶ້ນໄປ. ໃນກໍລະນີຜູ້ທີ່ສາມຫາກບໍ່ມີວຸດທິການສຶກສາລະດັບປະລິນຍາໂທກໍສາມາດມີວຸດທິການສຶກສາ ດັ່ງນີ້:
    - ໃນກໍລະນີ ມີວຸດທິການສຶກສາຂັ້ນສູງ ຫາ ປະລິນຍາຕີ ຕ້ອງມີປະສົບປະການ ກ່ຽວກັບ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງໜ້ອຍ ສາມປີ ຂຶ້ນໄປ, ຫຼື

- ໃນກໍລະນີ ມີວຸດທິການສຶກສາຕໍ່າກວ່າຊັ້ນສູງ ຕ້ອງມີປະສົບປະການໃນພາກສະໜາມ ຢ່າງໜ້ອຍ ຫ້າປີ ຂຶ້ນໄປ.

2. ການໃຫ້ບໍລິການວິຊາການ ກ່ຽວກັບ ສິ່ງແວດລ້ອມ ໃນຂໍ້ 1, ມາດຕາ 2 ຂອງຂໍ້ຕົກລົງ ສະບັບ ເລກທີ 0345/ກຊສ. ລົງວັນທີ 22 ມັງກອນ 2015. ຕ້ອງປະກອບຊ່ຽວຊານສະເພາະດ້ານປະຈໍາຢູ່ວິສາຫະກິດຢ່າງໜ້ອຍ ຫ້າຄົນ ຂຶ້ນໄປ. ໃນກໍລະນີຜູ້ທີສີ່ ແລະ ຫ້າ ຫາກບໍ່ມີວຸດທິການສຶກສາລະດັບປະລິນຍາໂທ ກໍສາມາດມີວຸດທິການສຶກສາ ດັ່ງນີ້:
   - ໃນກໍລະນີ ມີວຸດທິການສຶກສາຊັ້ນສູງ ຫາ ປະລິນຍາຕີ ຕ້ອງມີປະສົບປະການ ກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຢ່າງໜ້ອຍ ສາມປີ ຂຶ້ນໄປ, ຫຼື
   - ໃນກໍລະນີ ມີວຸດທິການສຶກສາຕໍ່າກວ່າຊັ້ນສູງ ຕ້ອງມີປະສົບປະການໃນພາກສະໜາມ ຢ່າງໜ້ອຍ ຫ້າປີ ຂຶ້ນໄປ.
3. ໃນກໍລະນີ ວິສາຫະກິດຫາກມີຈຸດປະສົງການໃຫ້ບໍລິການວິຊາການ ກ່ຽວກັບ ສິ່ງແວດລ້ອມ ທັງ 10 ຂໍ້ ໃນມາດຕາ 2 ຂອງຂໍ້ຕົກລົງ ສະບັບເລກທີ 0345/ກຊສ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານດັ່ງທີ່ກໍານົດໄວ້ໃນຂໍ້ 2 ຂອງມາດຕາ 7 (ປັບປຸງ) ຂ້າງເທິງນີ້.
4. ຊ່ຽວຊານສະເພາະດ້ານ ແລະ ວິຊາການທຸກທ່ານ ທີ່ປະກອບເຂົ້າວິສາຫະກິດທີ່ຈະດໍາເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ທີ່ບໍ່ແມ່ນສັນຊາດລາວ ຕ້ອງມີ ສໍາເນົາໜັງສືຜ່ານແດນ, ບັດອະນຸຍາດເຮັດວຽກສໍາລັບຜູ້ອອກແຮງງານຕ່າງປະເທດຢູ່ ສປປ ລາວ. ຖ້າແມ່ນຄົນຕ່າງດ້າວ ທີ່ມາຕັ້ງພູມລໍາເນົາຖາວອນຢູ່ ສປປ ລາວ ຕ້ອງມີໃບຕ່າງດ້າວ ຊຶ່ງກະຊວງພາຍໃນອອກໃຫ້
5. ຊ່ຽວຊານສະເພາະດ້ານ ແລະ ວິຊາການທຸກທ່ານ ຕ້ອງມີການຢັ້ງຢືນ ຈາກອົງການທີ່ມີສິດທາງດ້ານກົດໝາຍ ເຖິງຖານະປັດຈຸບັນ ບໍ່ສັງກັດລັດ, ບໍ່ສັງກັດວິສາຫະກິດບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມອື່ນ.

## 2. ໃບຄໍາຮ້ອງ.

ເພື່ອຮັບປະກັນຄວາມເອກະພາບທາງດ້ານແບບພິມ ແລະ ເນື້ອໃນຂອງໃບຄໍາຮ້ອງທີ່ ວິສາຫະກິດ ມີຈຸດປະສົງ ດໍາເນີນການບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ການປະກອບໃບຄໍາຮ້ອງ ແມ່ນໃຫ້ປະຕິບັດຕາມ ແບບພິມ 01 .

## 3. ບົດວິພາກເສດຖະກິດຂອງ ວິສາຫະກິດ.

ເພື່ອຮັບປະກັນຄວາມເປັນເອກະພາບທາງດ້ານແບບພິມ ແລະ ເນື້ອໃນບົດວິພາກເສດຖະກິດຂອງວິສາຫະກິດ ໃຫ້ປະຕິບັດຕາມ ແບບພິມ 02.

## 4. ການປະກອບຊີວະປະຫວັດ

ການປະກອບຊີວະປະຫວັດຂອງ ຊ່ຽວຊານສະເພາະດ້ານ ແລະ ວິຊາການທຸກທ່ານ ທີ່ປະກອບເຂົ້າວິສາຫະກິດ ຕ້ອງໃຫ້ເປັນພາສາລາວ, ຈະແຈ້ງ, ແທດເໝາະກັບຄວາມເປັນຈິງຂອງບຸກຄົນ ແລະ ຕ້ອງເປັນຕົ້ນສະບັບ ໂດຍໃຫ້ປະຕິບັດຕາມ ແບບພິມ 03.

## 5. ອຸປະກອນ.

ວິສາຫະກິດ ຕ້ອງປະຕິບັດເງື່ອນໄຂໃນການປະກອບອຸປະກອນ ແລະ ເຄື່ອງມືອັນຈໍາເປັນພື້ນຖານສໍາລັບວຽກງານບໍລິການຕ້ອງການ ແລະ ວຽກງານວິຊາສະເພາະຕາມຄວາມເໝາະສົມ ເຊັ່ນ: ສໍາລັບວຽກງານ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ້ອງປະກອບ ເຄື່ອງມື GPS, ເຄື່ອງວັດແທກຄຸນນະພາບນໍ້າ, ເຄື່ອງວັດແທກຄຸນນະພາບອາກາດ ແລະ ວຽກງານອື່ນໆ ຕ້ອງປະກອບອຸປະກອນ ແລະ ເຄື່ອງມືຕາມຄວາມຈໍາເປັນຂັ້ນພື້ນຖານ.

## 6. ໃບຢັ້ງຢືນຖານະດ້ານການເງິນ.

ວິສາຫະກິດ ຕ້ອງໄດ້ຄັດຕິດໃບຢັ້ງຢືນຖານະດ້ານການເງິນ (ປື້ມບັນຊີເງິນຝາກ) ຂອງຕົນ ທີ່ມີຢູ່ໃນ ທະຄານໃດໜຶ່ງພາຍໃນ ສປປ ລາວ ລວມທັງຜົນຂອງການເຄື່ອນໄຫວທາງດ້ານການເງິນໃນຊ່ວງໄລຍະ ຫົກ ເດືອນ.

## 7. ກົດລະບຽບພາຍໃນຂອງ ວິສາຫະກິດ.

ວິສາຫະກິດ ຕ້ອງນຳສະເໜີກົດລະບຽບພາຍໃນຂອງ ວິສາຫະກິດເຊິ່ງປະກອບມີເນື້ອໃນຕົ້ນຕໍ ບົນພື້ນຖານໂຄງປະກອບການຈັດຕັ້ງຂອງ ວິສາຫະກິດ ເຊັ່ນ: ການກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງບໍລິຫານວຽກງານ, ການວ່າຈ້າງງານ, ຄ່າແຮງງານ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ ໂດຍມີການເຊັນຢັ້ງຢືນຈາກເຈົ້າຂອງ ວິສາຫະກິດ.

## 8. ບົດລາຍງານການເຄື່ອນໄຫວຂອງວິສາຫະກິດ.

ພາຍຫລັງທີ່ວິສາຫະກິດໄດ້ຮັບ ໃບອະນຸຍາດ ດຳເນີນບໍລິການດ້ານວິຊາການ ກ່ຽວກັບ ສິ່ງແວດລ້ອມ ຕ້ອງໄດ້ສົ່ງ ບົດລາຍງານຜົນການເຄື່ອນໄຫວວຽກງານຂອງຕົນສົ່ງຫາ ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ໃນທຸກໆ ຫົກ ເດືອນ.

ສາມເດືອນກ່ອນໃບອະນຸຍາດຈະໝົດອາຍຸ, ວິສາຫະກິດທີ່ມີຈຸດປະສົງຢາກສືບຕໍ່ການບໍລິການດັ່ງກ່າວ ຕ້ອງສົ່ງ ບົດລາຍງານຜົນການເຄື່ອນໄຫວວຽກງານຂອງຕົນໃນໄລຍະ 2 ປີ (ໄລຍະອາຍຸຂອງໃບອະນຸຍາດ) ໃຫ້ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ. ພ້ອມທັງ ບົດວິພາກເສດຖະກິດ ເພື່ອພິຈາລະນາອະນຸມັດການຕໍ່ ໃບອະນຸຍາດ ຂັ້ນຕໍ່ໄປ ໂດຍໃຫ້ນຳໃຊ້ຮ່າງບົດລາຍງານຕາມ ແບບພິມ 04.

ສຳລັບ ວິສາຫະກິດ ທີ່ມີຈຸດປະສົງຢຸດເຊົາການບໍລິການດັ່ງກາວ ຕ້ອງແຈ້ງເປັນລາຍລັກສອນ ກ່ຽວກັບການຢຸດເຊົາຂອງຕົນຕໍ່ກົມ ສົ່ງເສີມຄຸນນະພາບສິ່ງແວດລ້ອມ.

ຖ້າຫາກວ່າ ວິສາຫະກິດໃດບໍ່ປະຕິບັດຕາມທີ່ໄດ້ກ່າວມາຂ້າງເທິງນີ້ແມ່ນ ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ຈະບໍ່ຮັບພິຈາລະນາໃນການຂໍ ໃບອະນຸຍາດໃໝ່ ຫຼື ຂໍຕໍ່ ໃບອະນຸຍາດ ຄັ້ງຕໍ່ໄປ.

ຫົວໜ້າ ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ

ຄຳປະດິດ ຄຳມູນເຮືອງ